ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສໍານັກງານນາຍົກລັດຖະມົນຕີ

ເລກທີ 265 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 11-09-2009

# ດໍາລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນແມ່ບົດ ກ່ຽວກັບການພັດທະນາລັດແຫ່ງກົດໝາຍຂອງ ສປປ ລາວ ແຕ່ນີ້ ຮອດປີ 2020

- ອີງຕາມ ມາດຕາ 12 ຂອງກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈໍາເດືອນ ມີນາ ຄັ້ງວັນທີ 31 ມີນາ 2009.
- ອີງຕາມໜັງສືສະເໜີຂອງກະຊວງຍຸຕິທໍາ ສະບັບເລກທີ 61/ກຍ, ລົງວັນທີ 7 ກໍລະກົດ 2009.

### ນາຍົກລັດຖະມົນຕີແຫ່ງ ສປປ ລາວ ອອກດໍາລັດ

ມາດຕາ 1 : ຮັບຮອງ ແລະ ປະກາດໃຊ້ ແຜນແມ່ບົດ ກ່ຽວກັບການພັດທະນາລັດແຫ່ງກົດໝາຍຂອງ ສປປ ລາວ ແຕ່ນີ້ ຮອດປີ 2020.

ມາດຕາ 2 : ມອບໃຫ້ ກະຊວງຍຸຕິທໍາ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບກັບຄະນະກໍາມະທິການກົດໝາຍຂອງສະພາແຫ່ງຊາດ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນແມ່ບົດດັ່ງກ່າວໃຫ້ປະກົດຜົນເປັນຈິງ.

ມາດຕາ 3 : ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫລວງ, ແຂວງ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4 : ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງສປປ ລາວ

ບົວສອນ ບຸບຜາວັນ